# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ.

pwc

## ເອກະສານລາຍງານການເງິນ

(ສອດຄ່ອງກັບຫຼັກການບັນຊີທະນາຄານ ແລະ ບັນດາລະບຽບການ
ແລະ ແຈ້ງການຕ່າງໆທີ່ອອກໂດຍຂອງທະນາຄານແຫ່ງ ສປປ ລາວ)

**31 ທັນວາ 2016**

**ສາລະບານ** **ໜ້າ**


| | |
|---|---|
| ບົດລາຍງານສະພາຜູ້ບໍລິຫານ | 1 |
| ບົດລາຍງານຂອງຜູ້ກວດສອບອິດສະຫຼະ | 2-4 |
| ໃບສະຫລຸບຊັບສິນບັດ | 5 |
| ໃບລາຍງານຜົນໄດ້ຮັບ | 6 |
| ໃບລາຍງານການປ່ຽນແປງຂອງທຶນ | 7 |
| ໃບລາຍງານກະແສເງິນສົດ | 8-9 |
| ບົດອະທິບາຍປະກອບເອກະສານລາຍງານການເງິນ | 10-34 |

**ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**
**ບົດລາຍງານສະພາຜູ້ບໍລິຫານ**
**ໃນວັນທີ 31 ທັນວາ 2016**

**ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ**

ສະພາບໍລິຫານ ຂອງທະນາຄານ ອາ ເຮັສ ບີ ລາວ ຈຳກັດ ແມ່ນມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນນະວັນທີ 31 ທັນວາ 2016 ເພື່ອຮັບປະກັນວ່າ ບົດລາຍງານຖານະການເງິນ, ຜົນການດຳເນີນງານ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດລວມທ້າຍປີ ແມ່ນໄດ້ຖືກກະກຽມ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ແລະ ລະບຽບການບັນຊີທະນາຄານ ພ້ອມກັບແຈ້ງການອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 2 ໃນເອກະສານລາຍງານການເງິນ, ການກະກຽມເອກະສານລາຍງານການເງິນນີ້ແມ່ນຮຽກຮ້ອງໃຫ້ສະພາບໍລິຫານຂອງທະນາຄານຕ້ອງໄດ້ປະຕິບັດ ດັ່ງນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມ ເຊິ່ງໄດ້ຈາກການນຳໃຊ້ວິຈາລະນະຍານ ແລະ ການຄາດຄະເນ ຢ່າງສົມເຫດສົມຜົນ, ຮອບຄອບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ;

ii) ປະຕິບັດປະຕິບັດໃຫ້ສອດຄ່ອງຕາມຫຼັກການບັນຊີທະນາຄານ ແລະ ລະບຽບການບັນຊີ ພ້ອມທັງແຈ້ງການອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 2 ໃນເອກະສານລາຍງານການເງິນ ແລະ ແນ່ໃຈວ່າ ສິ່ງເຫຼົ່ານີ້ໄດ້ຮັບການເປີດເຜີຍ, ອະທິບາຍ ແລະ ສະແດງອອກໃນເອກະສານລາຍງານການເງິນຢ່າງເໝາະສົມ;

iii) ບຳລຸງຮັກສາລາຍລະອຽດການບັນທຶກບັນຊີຢ່າງເໝາະສົມພຽງພໍ ແລະ ບຳລຸງຮັກສາການຄວບຄຸມພາຍໃນໃຫ້ມີປະສິດທິພາບ;

iv) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງ ເວັ້ນເສຍແຕ່ວ່າບໍ່ມີຄວາມເໝາະສົມທີ່ ຈະຄາດຄະເນວ່າ ທະນາຄານຈະດຳເນີນການຕໍ່ໄປໃນອານາຄົດອັນໃກ້; ແລະ

v) ຄຸ້ມຄອງ ແລະ ຊີ້ນຳທະນາຄານຢ່າງມີປະສິດທິພາບ ແລະ ເຂົ້າຮ່ວມ ໃນທຸກໆການຕັດສິນໃຈ ທີ່ມີສາລະສຳຄັນ ທີ່ມີຜົນກະທົບຕໍ່ການດຳເນີນງານ ແລະຜົນປະກອບການຂອງທະນາຄານ ແລະ ແນ່ໃຈວ່າເອກະສານລາຍງານການເງິນແມ່ນສອດຄ່ອງກັບຜົນໄດ້ຮັບຂອງການຕັດສິນໃຈດັ່ງກ່າວ.

ຄະນະຜູ້ບໍລິຫານຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຢ່າງສອດຄ່ອງຕາມຂໍ້ກຳນົດຂ້າງເທິງນີ້ເຂົ້າ ໃນການສ້າງເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2016.

**ບົດລາຍງານຂອງຄະນະຜູ້ບໍລິຫານຕໍ່ເອກສານລາຍງານການເງິນ**

ພວກເຮົາຂໍຮັບຮອງວ່າ ການກະກຽມລາຍງານການເງິນນະວັນທີ 31 ທັນວາ 2016 ແມ່ນມີຄວາມສຳຄັນຕໍ່ຖານະການເງິນຂອງທະນາຄານ ຜົນການດຳເນີນງານ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດລວມ ແລະໄດ້ຖືກປະຕິບັດຢ່າງຖືກຕ້ອງສອດຄ່ອງກັບກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ໝາຍເຫດປະກອບທີ 2 ເອກະສານລາຍງານການເງິນ.

ໃນນາມຂອງຄະນະສະພາບໍລິຫານ

ທະນາຄານ ອາເຮັສບີ ລາວ ຈຳກັດ RHB Bank Lao Limited

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

ວັນທີ: 29 ມີນາ 2017

pwc

## ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫລະ

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາບໍລິຫານ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**

### ຄວາມເຫັນ

ຕາມຄວາມເຫັນຂອງພວກເຮົາແລ້ວ ເອກະສານລາຍງານການເງິນ ຂອງ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ ("ທະນາຄານ") ໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ແລະ ແຈ້ງການອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ໃນເອກະສານລາຍງານການເງິນສະບັບນີ້.

### ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບສະຫລຸບຊັບສົມບັດ ນະວັນທີ 31 ທັນວາ 2016;
- ໃບລາຍງານຜົນໄດ້ຮັບ ສຳລັບທ້າຍປີ
- ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ສຳລັບທ້າຍປີ;
- ໃບລາຍງານກະແສເງິນສົດສຳລັບທ້າຍປີ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ສັງລວມຫຼັກການບັນຊີທີ່ເປັນສາລະສຳຄັນ.

### ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານດັ່ງກ່າວໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບ ການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

### ຄວາມເປັນເອກະລາດ

ພວກເຮົາມີຄວາມເປັນເອກະລາດຈາກທະນາຄານ ຕາມຂໍ້ກຳນົດຈັນຍາບັນຂອງຜູ້ປະກອບອາຊີບນັກບັນຊີ ໃນສ່ວນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດສຳລັບນັກບັນຊີ (IESBA Code) ແລະ ພວກເຮົາຍັງໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ ທີ່ສອດຄ່ອງກັບຈັນຍາບັນວິຊາຊີບນັກບັນຊີ (IESBA Code).

### ປະເດັນທີ່ຄວນເນັ້ນໜັກ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ ບົດລາຍງານການເງິນ

ພວກເຮົາໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງຫຼັກການບັນຊີ. ເອກະສານລາຍງານການເງິນນີ້ແມ່ນໄດ້ກະກຽມ ໂດຍສອດຄ່ອງຕາມຫຼັກການບັນຊີ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ. ຊຶ່ງເປັນຜົນໃຫ້ເອກະສານລາຍງານການເງິນນີ້ ອາດຈະບໍ່ເໝາະສົມສຳລັບ ວັດຖຸປະສົງອື່ນ.

ບົດລາຍງານການເງິນນີ້ແມ່ນໃຊ້ເພື່ອວັດຖຸປະສົງຂອງທະນາຄານ ແລະ ບໍ່ຄວນຈະແຈກຢາຍ ຫຼື ໃຫ້ບຸກຄົນອື່ນ. ນອກຈາກ ຜູ້ບໍລິຫານທະນາຄານ ອາ ເຮັສ ບີ ລາວ ຈຳກັດ. ຄວາມເຫັນຂອງພວກເຮົາບໍ່ໄດ້ແຕກຕ່າງຈາກຄວາມເຫັນທີ່ໄດ້ສະແດງໄວ້ເນື່ອງຈາກເຫດຜົນດັ່ງກ່າວ.

pwc

**ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ຄະນະກຳມະການກວດສອບ ຕໍ່ເອກະສານລາຍງານການເງິນ**

ຜູ້ບໍລິຫານມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການບັນຊີທີ່ກ່ຽວຂ້ອງ ແລະ ການແຈ້ງການຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນນີ້ ດັ່ງນັ້ນ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ແມ່ນມີຄວາມຈຳເປັນ ເພື່ອອຳນວຍຄວາມສະດວກຕໍ່ການສ້າງເອກະສານລາຍງານການເງິນທີ່ປາສະຈາກ ຄວາມບໍ່ຖືກຕ້ອງທີ່ເປັນສາລະສຳຄັນ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານໃນການດຳເນີນງານບົນພື້ນຖານຫຼັກການຄວາມສືບເນື່ອງ, ເປີດເຜີຍປະເດັນທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ນຳໃຊ້ພື້ນຖານບັນຊີຕາມຫຼັກການຄວາມສືບເນື່ອງ. ຍົກເວັ້ນ ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຂາຍທະນາຄານ ຫຼື ຍຸດຕິການດຳເນີນງານ ຫຼື ບໍ່ມີທາງເລືອກອື່ນແຕ່ຈຳເປັນຕ້ອງປະຕິບັດສິ່ງທີ່ກ່າວມານັ້ນ.

ຄະນະກຳມະການກວດສອບ ມີໜ້າທີ່ຊ່ວຍຜູ້ອຳນວຍການເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ.

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນເຊິ່ງລວມມີຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ວິຈາລະນະຍານຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ປະເມີນຄວາມສ່ຽງຂອງການເກີດຂໍ້ຜິດພາດທີ່ເປັນສາລະສຳຄັນໃນເອກະສານລາຍງານການເງິນ ທີ່ເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ລວບລວມຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃນການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ສາມາດກວດພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈທີ່ຈະບໍ່ເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ການນຳສະເໜີແບບບໍ່ຖືກຕ້ອງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເຫດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານທະນາຄານ.

pwc

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີທີ່ມີລັກສະນະການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ພ້ອມທັງສະຫຼຸບໂດຍອີງໃສ່ຫຼັກຖານການກວດສອບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນໃດ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີບັດໃຈໃຫ້ເກີດຂໍ້ສົງໃສຢ່າງມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼືບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ເປັນສາລະສຳຄັນເກີດຂຶ້ນ ພວກເຮົາຕ້ອງດຶງຄວາມສົນໃຈຂອງຜູ້ນຳໃຊ້ງົບການເງິນໂດຍລະບຸໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ຈະອ້າງອີງໄປເຖິງການເປີດເຜີຍຂໍ້ມູຮທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼືຖ້າການເປີດເຜີຍດັ່ງກ່າວຫາກມີຄວາມພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ພວກເຮົາອອກບົດລາຍງານການກວດສອບ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.
- ປະເມີນການນຳສະເໜີ, ໂຄສ້າງ ແລະ ເນື້ອໃນ ໂດຍລວມຂອງເອກະສານລາຍງານການເງິນ, ເຊິ່ງລວມເຖິງການເປີດເຜີຍ ແລະການນຳສະເໜີວ່າເອກະສານລາຍງານການເງິນໄດ້ສະແດງລາຍການ ແລະ ເຫດການໃນຮູບແບບທີ່ຍຸດຕິທຳ.

ພວກເຮົາໄດ້ສື່ສານກັບຜູ້ຈັດການທະນາຄານກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກູບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ສະກຸນາ ແຍ້ມສະກຸນ
ຮຸ້ນສ່ວນບໍລິສັດ
ນະຄອນຫຼວງວຽງຈັນ, ສປປ ລາວ.
29 ມີນາ 2017

## ທະນາຄານ ອາ ເຮັສ ບີ ລາວ ຈຳກັດ

### ໃບສະຫລຸບຊັບສົມບັດ
### ສຳລັບປີສິ້ນສຸດວັນທີ 31 ທັນວາ 2016

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ຍອດເຫຼືອກັບທະນາຄານກາງ | 4 | 459.488.220.174 | 142.640.300.590 |
| ເງິນຝາກກັບທະນາຄານອື່ນ | 5 | 59.130.917.698 | 23.743.546.574 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 7 | 329.226.542.758 | 193.345.161.449 |
| ຊັບສິນຄົງທີ່ມີຕົວຕົນ | 8 | 15.111.143.900 | 13.693.098.735 |
| ຊັບສິນບໍ່ມີຕົວຕົນ | 9 | 3.447.353.313 | 4.815.364.461 |
| ຊັບສິນອື່ນໆ | 10 | 14.946.000.087 | 3.761.829.351 |
| **ຊັບສິນ** | | **881.350.177.930** | **381.999.301.160** |
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | 11 | 42.983.115.582 | 36.381.901.236 |
| ເງິນຝາກຈາກທະນາຄານອື່ນ | 12 | 54.000.979.125 | - |
| ຈຳນວນເງິນຈາກບໍລິສັດແມ່ | 13 | 457.159.305.835 | 46.471.620.816 |
| ໜີ້ສິນອື່ນໆ | 14 | 23.317.275.985 | 1.321.416.956 |
| **ລວມຍອດໜີ້ສິນ** | | **577.460.676.527** | **84.174.939.008** |
| **ທຶນ** | | | |
| ທຶນຈົດທະບຽນ | 15 | 301.500.000.000 | 301.500.000.000 |
| ສຳຮອງເງິນຕາມລະບຽບການ | | 190.340.872 | - |
| ກຳໄລສະສົມ/(ຂາດທຶນສະສົມ) | | 2.199.160.531 | (3.675.637.848) |
| **ລວມຍອດທຶນ** | | **303.889.501.403** | **297.824.362.152** |
| **ລວມຍອດໜີ້ສິນ ແລະ ທຶນ** | | **881.350.177.930** | **381.999.301.160** |

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

29 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 10 ເຖິງ 34 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ.
ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2-4.

## ທະນາຄານ ອາ ເຮັສ ບີ ລາວ ຈຳກັດ

### ໃບລາຍງານຜົນໄດ້ຮັບ
### ສຳລັບປີສິ້ນສຸດວັນທີ 31 ທັນວາ 2016

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| ລາຍຮັບດອກເບ້ຍ | | 33.749.547.943 | 13.688.525.300 |
| ລາຍຈ່າຍດອກເບ້ຍ | | (8.555.444.160) | (383.034.173) |
| **ລາຍຮັບດອກເບ້ຍສຸດທິ** | 16 | **25.194.103.783** | **13.305.491.127** |
| ຄ່າເຊື່ອມມູນຄ່າຂອງເງິນໃຫ້ກູ້ຢືມ | 7 | (3.271.319.327) | (591.828.444) |
| **ລາຍຮັບດອກເບ້ຍສຸດທິຫຼັງຈາກຫັກຄ່າເຊື່ອມມູນຄ່າ** | | **21.922.784.456** | **12.713.662.683** |
| ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ | | 2.001.756.742 | 1.606.604.306 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ | | (175.520.560) | (145.132.981) |
| **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ** | 17 | **1.826.236.182** | **1.461.471.325** |
| ກຳໄລ-ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ, ສຸດທິ | | (807.312.219) | 1.952.732.223 |
| ເງິນເດືອນ ແລະ ລາຍຈ່າຍອື່ນໆສຳລັບພະນັກງານ | 18 | (8.472.366.502) | (5.126.635.873) |
| ລາຍຈ່າຍບໍລິຫານ ແລະ ລາຍຈ່າຍທົ່ວໄປ | 19 | (4.438.245.599 ) | (3.745.431.065) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ | 8,9 | (3.850.973.311) | (3.658.793.667) |
| **ລວມລາຍຈ່າຍ** | | **(17.568.897.631)** | **(10.578.128.382)** |
| **ກຳໄລກ່ອນອາກອນ** | | **6.180.123.007** | **3.597.005.626** |
| ລາຍຈ່າຍອາກອນລາຍໄດ້ | 20 | (114.983.756) | - |
| **ກຳໄລສຸດທິພາຍໃນປີ** | | **6.065.139.251** | **3.597.005.626** |

ແດນນີ ລິ້ງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

29 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 10 ເຖິງ 34 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ.
ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2-4.

## ໃບລາຍງານການປ່ຽນແປງຂອງທຶນ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2016

| | ທຶນຈົດທະບຽນ<br>ກີບ | ສຳຮອງຕາມ<br>ລະບຽບການ<br>ກີບ | ກຳໄລສະສົມ/(ຂາດທຶນສະສົມ)<br>ກີບ | ລວມ<br>ກີບ |
|---|---|---|---|---|
| ວັນທີ 1 ມັງກອນ 2015 | 301.500.000.000 | - | (7.272.643.474) | **294.227.356.526** |
| ກຳໄລສຳລັບປີ, ສຸດທິ | - | - | 3.597.005.626 | **3.597.005.626** |
| **ໃນວັນທີ 31 ທັນວາ 2015** | **301.500.000.000** | **-** | **(3.675.637.848)** | **297.824.362.152** |
| ວັນທີ 1 ມັງກອນ 2016 | 301.500.000.000 | - | (3.675.637.848) | **297.824.362.152** |
| ກຳໄລສຳລັບປີ, ສຸດທິ | - | - | 6.065.139.251 | **6.065.139.251** |
| ສຳຮອງຕາມ ລະບຽບການ | - | 190.340.872 | (190.340.872) | **-** |
| **ໃນວັນທີ 31 ທັນວາ 2016** | **301.500.000.000** | **190.340.872** | **2.199.160.531** | **303.889.501.403** |

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

29 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 10 ເຖິງ 34 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ.
ລາຍງານຂອງຜູ້ກວດສອບອິດສະຫຼະຄັດປິດລາຍງານຖານະການເງິນໜ້າ 2-4.

**ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2016**

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| ກຳໄລກ່ອນອາກອນ | | 6.180.123.007 | 3.597.005.626 |
| *ການດັດແກ້ສຳລັບ:* | | | |
| ຫັກຄ່າເຊື່ອມເງິນໃຫ້ກູ້ຢືມ | 7 | 3.271.319.327 | 591.828.444 |
| ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ | 8,9 | 3.850.973.311 | 3.658.793.667 |
| ກຳໄລ-ຂາດທຶນຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ ສຸດທິ | | 807.312.219 | (1.952.732.223) |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 16 | (33.749.547.943) | (13.688.525.300) |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 16 | 8.555.444.160 | 383.034.173 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນ** | | **(11.084.375.919)** | **(7.410.595.613)** |
| ຫຼຸດລົງ ຂອງເງິນຝາກຕາມລະບຽບການກັບທະນາຄານ ສປປ ລາວ | 4 | 57.426.184.122 | 132.396.411.879 |
| ການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 7 | (139.155.373.795) | (113.107.340.373) |
| ການເພີ່ມຂຶ້ນຂອງຊັບສິນອື່ນໆ | | (523.011.072) | (207.196.909) |
| ເພີ່ມຂຶ້ນເງິນຝາກຈາກລູກຄ້າ | 11 | 6.601.214.346 | 28.267.171.696 |
| ເພີ່ມຂຶ້ນຈາກທະນາຄານ | 12 | 54.000.979.125 | - |
| ເພີ່ມຂຶ້ນຈາກບໍລິສັດແມ່ | 13 | 418.577.940.000 | 12.222.000.000 |
| ເພີ່ມຂຶ້ນ-(ຫຼຸດລົງ) ຂອງໜີ້ສິນອື່ນໆ | | 15.192.966.563 | (2.608.961.417) |
| ດອກເບ້ຍຮັບ | | 23.088.388.459 | 13.110.104.106 |
| ດອກເບ້ຍຈ່າຍ | | (1.407.780.117) | (287.179.854) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການດຳເນີນງານ** | | **422.717.131.712** | **62.374.413.415** |
| **ກິດຈະກຳການລົງທຶນ** | | | |
| ຊື້ຊັບສິນຄົງທີ່ມີຕົວຕົນ (i) | | (3.901.007.328) | - |
| ຊື້ຊັບຊັບສິນຄົງທີ່ບໍ່ມີຕົວຕົນ (ii) | | - | (426.883.281) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ** | | **(3.901.007.328)** | **(426.883.281)** |

ບົດອະທິບາຍຊ້ອນທ້າຍ ໜ້າ 10 ເຖິງ 34 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ.
ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2-4.

**ໃບລາຍງານກະແສເງິນສົດ (ຕໍ່)**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2016**

| | | | |
|---|---|---|---|
| **ກິດຈະກຳທາງການເງິນ** | | | |
| ເພີ່ມຂຶ້ນໜີ້ຕ້ອງສົ່ງລະຫວ່າງ ບໍລິສັດ | | - | 1.293.585.396 |
| ຊຳລະຄືນໜີ້ຕ້ອງສົ່ງລະຫວ່າງ ບໍລິສັດ | | (7.726.320.861) | (2.036.830.196) |
| **ເງິນສົດສຸດທິ ທີ່ເກີດຈາກກິດຈະກຳທາງການ ເງິນ** | | **(7.726.320.861)** | **(743.244.800)** |
| ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ການທຽບເທົ່າ ເງິນສົດ | | 411.089.803.523 | 61.204.285.434 |
| ເງິນສົດ ແລະ ການທຽບເທົ່າເງິນສົດ, ຕົ້ນປີ | 6 | 104.907.605.585 | 43.183.373.284 |
| ຜົນກະທົບຈາກສ່ວນຕ່າງອັດຕາແລກປ່ຽນເງິນຕາ | | (1.428.328.693) | 519.946.867 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍ ປີ** | **6** | **514.569.080.415** | **104.907.605.585** |

(i) ຈຳນວນເງິນສົດທັງໝົດທີ່ຊື້ຊັບສິນຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ໃນລະຫວ່າງປີແມ່ນ 3.901.007.328 ກີບ (2015: 426.883.281 ກີບ). ຈຳນວນທີ່ຊື້ທັງໝົດໄດ້ຊຳລະໃນລະຫວ່າງປີ 2016. ໃນປີ 2015, ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດທີ່ກ່ຽວຂ້ອງກັບຕົ້ນທຶນຂອງການໄດ້ມາຂອງຊັບສິນຄົງທີ່ ແຕ່ບໍ່ໄດ້ຊຳລະໃນວັນທີ 31 ທັນວາ 2015 ຈຳນວນ 659.813.513 ກີບ.

ທະນາຄານ ອາ ເອັສບີ ລາວ ຈຳກັດ RHB Bank Lao Limited

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

29 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 10 ເຖິງ 34 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ.
ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2-4.

## ບົດອະທິບາຍປະກອບເອກະສານລາຍງານການເງິນ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2016

### 1. ຂໍ້ມູນທົ່ວໄປ

ທະນາຄານ ອາ ເຮັສ ບີ ລາວ ຈຳກັດ (“ທະນາຄານ”) ແມ່ນທະນາຄານການຄ້າ ເຊິ່ງສ້າງຕັ້ງ ແລະ ຈົດທະບຽນໃນ ສ ປປ ລາວ.

ເປັນທະນາຄານທຸລະກິດທີ່ລົງທຶນໂດຍຕ່າງປະເທດ 100% ດຳເນີນກິດຈະການໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”) ພາຍໃຕ້ກົດໝາຍທະນາຄານທຸລະກິດ ເລກທີ 03/ NA ລົງວັນທີ 26 ທັນວາ 2006 ແລະ ກົດລະບຽບຂອງທະນາຄານແຫ່ງ ສ ປປ ລາວ. ເຊິ່ງໄດ້ຮັບໃບທະບຽນວິສາຫະກິດ ເລກທີ 10/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 213/ຈທວ ລົງວັນທີ 30 ພຶດສະພາ 2014.

ວຽກງານຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

RHB Bank Berhad ຖືຮຸ້ນເຕັມໃນ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ 100 % ໃນວັນທີ 30 ພຶດສະພາ 2014. ເຊິ່ງມີທຶນຈົດທະບຽນ 301,500,000,000 ກີບ ມີ 30,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 10,050 ກີບ (ປີ 2015: 10.050 ກີບ). ທຶນຈົດທະບຽນທີ່ຖອກແລ້ວໃນວັນທີ 31 ທັນວາ 2016 ແມ່ນ 301.500.000.000 ກີບ (ປີ 2015: 301.500.000.000 ກີບ).

ສຳນັກງານຂອງທະນາຄານຕັ້ງຢູ່ ໜ່ວຍທີ 1, ບ້ານເລກທີ 008, ຖະໜົນໄກສອນ, ບ້ານ ໂພນສະອາດ, ນະຄອນນະຫຼວງວຽງຈັນ ສປປ ລາວ.

ທາງຄະນະກຳມະການປະຊຸມຂອງທາງທະນາຄານໄດ້ມີການທົບທວນເອກະສານການເງິນເຫຼົ່ານີ້ ແລະ ໄດ້ອະນຸມັດອອກວັນທີ 29 ມີນາ 2016.

### 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ

ວິທີການບັນຊີທີ່ສຳຄັນໄດ້ຖືກຮັບຮອງເພື່ອກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

#### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ຂອງທະນາຄານຖືກກະກຽມໂດຍສອດຄ່ອງກັບລະບຽບ ແລະ ແຈ້ງການຂອງທະນາຄານແຫ່ງ ສ.ປ.ປ ລາວ ແລະ ວິທີການບັນຊີ. ການນຳໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປ ໃນບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສ.ປ.ປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ເຈດຕະນາ ສະແດງຖານະການເງິນ ແລະ ຜົນການດຳເນີນງານ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສ.ປ.ປ ລາວ. ດ້ວຍເຫດນີ້ ເອກະສານລາຍງານການເງິນດັ່ງກ່າວນີ້ ຈະພຽງຊ່ວຍບອກໃຫ້ຮູ້ແຈ້ງ ກ່ຽວກັບວິທີການບັນຊີ, ຂັ້ນຕອນໃນການກະກຽມ ແລະ ການປະຕິບັດ ຂອງທະນາຄານ.

ການກະກຽມເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີຂອງທະນາຄານທີ່ຮັບຮອງເອົານັ້ນ ຮຽກຮ້ອງ ໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ເຖິງແມ່ນວ່າຕົວເລກຄາດຄະເນປະຕິບັດດັ່ງກ່າວ ແມ່ນສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ການປະຕິບັດ ຕົວຈິງໃນປັດຈຸບັນແລ້ວກໍ່ຕາມ ຜົນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເບື້ອງຕົ້ນ.

#### 2.2 ການວັດແທກມູນຄ່າ ແລະ ສະກຸນເງິນທີ່ນຳສະເໜີ

ທະນາຄານໄດ້ມີການບັນທຶກເປັນສະກຸນເງິນ ກີບ ແລະ ເອກະສານລາຍງານການເງິນໄດ້ຖືກນຳສະເໜີເປັນສະກຸນເງິນ ກີບ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.3 ເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ສຳຄັນ ຂອງທະນາຄານ ລວມມີ ເງິນສົດ ແລະ ຍອດເຫຼືອຝາກກັບທະນາຄານກາງ; ເງິນຝາກຢູ່ກັບ ທະນາຄານອື່ນ, ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ເງິນຝາກ ຈາກລູກຄ້າ ແລະ ສະຖາບັນການເງິນອື່ນ ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອື່ນໆ. ນະໂຍບາຍການບັນຊີ ໃນການຮັບຮູ້ ແລະ ການຕີມູນຄ່າ ຂອງບັນດາລາຍການເຫຼົ່ານີ້ ໄດ້ຖືກເປີດເຜີຍໃນນະໂຍບາຍບັນຊີທີ່ກ່ຽວຂ້ອງ.

### 2.4 ການຮັບຮູ້ລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍ

**ການຮັບຮູ້ລາຍຮັບດອກເບ້ຍ**

ລາຍໄດ້ດອກເບ້ຍ ຮັບຮູ້ຕາມຫຼັກການຄົງຄ້າງ

ລາຍໄດ້ດອກເບ້ຍ ຮັບຮູ້ໃນອັດຕາດອກເບ້ຍຕາມທີ່ລະບຸໄວ້ໃນສັນຍາເງິນໃຫ້ກູ້ຢືມກັບລູກຄ້າ ຍົກເວັ້ນສະເພາະລາຍການທີ່ກ່ຽວຂ້ອງກັບບັນຊີທີ່ບໍ່ມີການເຄື່ອນໄຫວ.

ບັນຊີທີ່ບໍ່ກໍ່ໃຫ້ເກີດລາຍໄດ້ ຈະຖືກຢຸດການບັນທຶກດອກເບ້ຍ ແລະ ລາຍຮັບດອກເບ້ຍທີ່ເຄີຍຖືກບັນທຶກໄວ້ ຈະຖືກກັບລາຍການ. ລາຍຮັບດອກເບ້ຍຈະຖືກຮັບຮູ້ເປັນລາຍຮັບກໍ່ຕໍ່ເມື່ອ ດອກເບ້ຍຄ້າງຮັບໃນບັນຊີທີ່ບໍ່ກໍ່ໃຫ້ເກີດລາຍໄດ້ນັ້ນຫາກສາມາດຖືກຮຽກເກັບໄດ້ພາຍຫຼັງ. ບັນຊີຂອງລູກຄ້າຈະຄິດເປັນໜີ້ທວງຍາກ ຫາກໜີ້ຄ້າງຄ້າງຊຳລະຢູ່ຫຼາຍກວ່າ 3 ເດືອນ ຫຼື 89 ມື້. ນີ້ແມ່ນອີງຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ລາຍຈ່າຍດອກເບ້ຍ**

ລາຍຈ່າຍດອກເບ້ຍເງິນຝາກຈາກລູກຄ້າ ຖືກຮັບຮູ້ ຕາມຫຼັກການຄ້າງຈ່າຍ ແລະ ຕາມອັດຕາດອກເບ້ຍທີ່ໄດ້ອະນຸມັດໄວ້.

### 2.5 ການຮັບຮູ້ ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ ຈາກກິດຈະກຳຕ່າງໆຂອງທະນາຄານທີ່ເກີດຂຶ້ນມີດັ່ງນີ້:

- ຄ່າທຳນຽມສັນຍາເງິນໃຫ້ກູ້ຢືມ ແລະ ຄ່ານາຍໜ້າ ໃນການບໍລິການ ແລະ ອຳນວຍຄວາມສະດວກໃຫ້ແກ່ລູກຄ້າ ແມ່ນບັນທຶກຕາມລາຍການເຄື່ອນໄຫວທີ່ເກີດຂຶ້ນ;
- ຄ່າທຳນຽມສັນຍາຜູກພັນ ແລະ ຄ່າທຳນຽມຄ້ຳປະກັນ ແລະ ອຳນວຍຄວາມສະດວກໃຫ້ກັບລູກຄ້າ ຖືເປັນລາຍໄດ້ຄົງທີ່ແບບສະເລ່ຍ ຕະຫຼອດໄລຍະເວລາການໃຫ້ການບໍລິການ ແລະ ອຳນວຍຄວາມສະດວກ.
- ການເກັບຄ່າບໍລິການ ແລະ ຄ່າທຳນຽມການດຳເນີນງານ ແມ່ນຖືກຮັບຮູ້ເມື່ອມີການສະໜອງການບໍລິການ.

### 2.6 ສະກຸນເງິນທີ່ໃຊ້ໃນການເຄື່ອນໄຫວ ແລະ ການປ່ຽນຄ່າເງິນຕາຕ່າງປະເທດ

ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ມີການປ່ຽນຄ່າເງິນຕາດັ່ງກ່າວເປັນສະກຸນເງິນກີບໃນທ້າຍປີ ໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບສະຫລຸບຊັບສິນບັດ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນສະກຸນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນໄລຍະ ຈະຖືກປ່ຽນຄ່າເປັນເງິນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ເມື່ອລາຍການນັ້ນເກີດຂຶ້ນ.

### 2.7 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ ເງິນສົດ ແລະ ຍອດເຫຼືອຢູ່ທະນາຄານ ແລະ ເງິນຝາກໄລຍະສັ້ນທີ່ມີກຳນົດພາຍໃນ (30) ມື້.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.8 ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນຈຳນວນເງິນ ທີ່ທະນາຄານ ເອົາເງິນໃຫ້ກັບລູກຄ້າເພື່ອຈຸດປະສົງອື່ນຫຼາຍກ່ວາ ການເກງກຳໄລໄລຍະສັ້ນ. ລາຍການດັ່ງກ່າວແມ່ນ ໄດ້ລາຍງານຕາມຍອດເງິນຕົ້ນທີ່ຍັງຄ້າງ ຫັກເງິນແຮ ເພື່ອສຳຮອງໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ເພື່ອສະແດງຈຳນວນເງິນທີ່ຄາດວ່າຈະສາມາດເກັບກູ້ຄືນໄດ້. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ (ຍົກເວັ້ນ ເງິນເກີນບັນຊີ) ຈະຖືກສະແດງອອກໂດຍບໍ່ລວມດອກເບ້ຍຕ້ອງຮັບ.

### 2.9 ສຳຮອງເງິນສຳລັບໜີ້ເສຍ

ອີງຕາມ ລະບຽບການ ຂອງທະນາຄານແຫ່ງ ສ.ປ.ປ ລາວ, ສະບັບເລກທີ 324/ທຫລ, ລົງວັນທີ 19 ເມສາ 2011, ຮຽກຮ້ອງໃຫ້ຈັດຊັ້ນໜີ້ ແລະສຳຮອງເງິນແຮເພື່ອໜີ້ເສຍ. ດັ່ງນັ້ນ ,ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫລື ເງິນກູ້ທີ່ບໍ່ເກີດດອກອອກຜົນ ໂດຍອີງຕາມການຄ້າງຊຳລະ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ(ກຸ່ມA) ຫຼື ເງິນກູ້ທີ່ຄວນເອົາໃຈໃສ່ຫຼືຕິດຕາມພິເສດ(ກຸ່ມB) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນຕ່ຳກ່ວາມາດຕະຖານ(ກຸ່ມC) ຫລືໜີ້ສົງໃສ(ກຸ່ມD) ຫລືໜີ້ສູນ(ກຸ່ມE) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ເງິນສຳຮອງແມ່ນໄດ້ຖືກຈັດປະເພດເປັນ ທົ່ວໄປ ແລະ ສະເພາະ ໂດຍອີງໃສ່ການຈັດປະເພດເງິນໃຫ້ກູ້ຢືມ. ຂ້າງລຸ່ມນີ້ແມ່ນສະຫຼຸບສັງລວມຂອງອັດຕາ ເງິນສຳຮອງ ທີ່ນຳໃຊ້ສຳລັບການຈັດປະເພດເງິນໃຫ້ກູ້ຢືມແຕ່ລະປະເພດ ໃນວັນທີຂອງໃບສະຫລຸບຊັບສົມບັດ.

| ປະເພດ ຂອງໜີ້ | ປະເພດ | ຈຳນວນມື້ເກີນກຳນົດ | ການຫັກເງິນແຮ |
|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ (ທົ່ວໄປ) | | | |
| A | ໜີ້ປົກກະຕິ | ຕ່ຳກ່ວາ 29 ມື້ | 0.5%-1% |
| B | ໜີ້ຄວນເອົາໃຈໃສ່ | 30 ຫາ 89 ມື້ | 3% |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ (ສະເພາະ) | | | |
| C | ໜີ້ຕ່ຳກ່ວາມາດຕະຖານ | 90 ຫາ 179 ມື້ | 20% |
| D | ໜີ້ສົງໃສ | 180 ຫາ 359 ມື້ | 50% |
| E | ໜີ້ສູນ | ຫຼາຍກວ່າ 360 ມື້ | 100% |

### 2.10 ຊັບສິນຄົງທີ່ບໍ່ມີຕົວຕົນ

ການໄດ້ມາ ຂອງສິດໃນການນຳໃຊ້ໂປແກຼມຄອມພິວເຕີ ແມ່ນບັນທຶກເປັນຕົ້ນທຶນບົນພື້ນຖານລາຍຈ່າຍທີ່ເກີດຂຶ້ນຕົວຈິງທີ່ເຮັດໃຫ້ສາມາດນຳໃຊ້ໂປແກຼມສະເພາະໃດໜຶ່ງ. ລາຍຈ່າຍ ສຳລັບສິດໃນການນຳໃຊ້ໂປແກຼມຄອມພິວເຕີ ແມ່ນຈະໄດ້ນຳເອົາຕົ້ນທຶນຫັກຄ່າຫຼຸ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ. ລາຍຈ່າຍຕົ້ນທຶນນີ້ແມ່ນຈະຖືກຫັກຄ່າເຊື່ອມມູນຄ່າຕະຫຼອດອາຍຸການໃຊ້ງານຄາດຄະເນ 2 ປີ ເຊິ່ງອາຍຸການນຳໃຊ້ແມ່ນອີງຕາມກົດໝາຍສ່ວຍສາອາກອນ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.11 ຊັບສິນຄົງທີ່ທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ ແມ່ນສະແດງໃນລາຄາຕົ້ນທຶນຫັກດ້ວຍຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າ

ຄ່າຫຼຸ້ຍຫ້ຽນຂອງຊັບສົມບັດຄົງທີ່ແມ່ນໃຊ້ ວິທີການຄິດໄລ່ແບບສະໝໍ່າສະເໝີ ໂດຍການຄາດຄະເນຈາກອະຍຸການນຳໃຊ້ງານຂອງຊັບສິນແຕ່ລະ ລາຍການໃນອັດຕາຕໍ່ປີດັ່ງຕໍ່ໄປນີ້

| ປະເພດຊັບສົມບັດ | ອັດຕາການຫັກຄ່າຫຼູ້ຍຫ້ຽນ |
|---|---|
| ພາຫະນະ | 20% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ການປັບປຸງອາຄານ | 5% |
| ອຸປະກອນຄອມພິວເຕີ | 20% |

ມູນຄ່າຄົງເຫຼືອຂອງຊັບສິນ ແລະ ອາຍຸການນຳໃຊ້ແມ່ນຈະມີການຕີມູນຄ່າຄືນໃໝ່ ແລະ ປັບປຸງຕາມຄວາມເໝາະສົມ ໃນວັນທີສິ້ນສຸດການລາຍງານ. ໂດຍຜ່ານການກວດກາແລ້ວ ບໍ່ມີການດັດແກ້ທີ່ສຳຄັນ ທີ່ຈະຕ້ອງນຳສະເໜີໃຫ້ເຫັນໃນເອກະສານລາຍງານການເງິນ.

ກຳໄລ ຫຼື ຂາດທຶນຈາກການຂາຍ ຈະຖືກກຳນົດໂດຍການສົມທຽບສິ່ງທີ່ໄດ້ຮັບຈາກການຂາຍຕົວຈິງ ກັບມູນຄ່າທາງບັນຊີ ແລະ ຈະຖືກລວມເຂົ້າໄປໃນ ລາຍຮັບທີ່ບໍ່ແມ່ນດອກເບ້ຍ ເຊິ່ງຢູ່ໃນໃບລາຍງານຜົນໄດ້ຮັບ. ໃນວັນສິ້ນສຸດການລາຍງານ, ທະນາຄານໄດ້ປະເມີນວ່າມີຂໍ້ຜິດພາດໃນຄ່າເຊື່ອມມູນຄ່າຫຼືບໍ່. ຖ້າຫາກມີປັດໃຈຫຼືຂໍ້ສັງເກດທີ່ເຮັດໃຫ້ມີການເຊື່ອມມູນຄ່າເກີດຂຶ້ນ ມູນຄ່າທາງບັນຊີຂອງຊັບສິນ ຈະຖືກບັນທຶກລົງໃນມູນຄ່າທີ່ຄາດວ່າຈະສາມາດເກັບຄືນໄດ້.

### 2.12 ເງິນຝາກຕາມລະບຽບການ

ພາຍໃຕ້ກົດໝາຍວ່າດ້ວຍທະນາຄານການຄ້າ ລົງວັນທີ 16 ມັງກອນ 2007, ທຸກໆ ທະນາຄານການຄ້າ ຈະຕ້ອງໄດ້ແບ່ງສ່ວນກຳໄລສຸດທິເພື່ອສຳຮອງຕາມລະບຽບການ ແລະ ກອງທຶນອື່ນໆ ດັ່ງຕໍ່ໄປນີ້:

ເພື່ອໃຫ້ສອດຄ່ອງກັບ ລະບຽບການກ່ຽວກັບຄວາມພຽງພໍຂອງເງິນແຮ ເລກທີ 1/ທຫລ ລົງວັນທີ 28 ສິງຫາ 2002 ໂດຍ ປະທານຂອງທະນາຄານແຫ່ງຊາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ, ທະນາຄານຈະຕ້ອງມີເງິນແຮ ໃນອັດຕາ 5% ຫາ 10% ຂອງກຳໄລຫຼັງຫັກອາກອນ ຂຶ້ນຢູ່ກັບການຕັດສິນໃຈຂອງສະພາຜູ້ບໍລິຫານ.

### 2.13 ສັນຍາເຊົ່າທົ່ວໄປ - ທະນາຄານເປັນຜູ້ເຊົ່າ

ສັນຍາເຊົ່າ ທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນ ໃຫ້ແກ່ຜູ້ເຊົ່າ ຈະຖືກຈຳແນກເປັນສັນຍາເຊົ່າທົ່ວໄປ (ສັນຍາເຊົ່າໃນການທຸລະກິດ). ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າທົ່ວໄປ (ໂດຍຫັກທຸກລາຍການ ທີ່ໄດ້ຮັບ ຈາກຜູ້ໃຫ້ເຊົ່າ) ໄດ້ຈັດເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ບົນພື້ນຖານວິທີສະເລ່ຍ ຕະຫຼອດ ໄລຍະອາຍຸການເຊົ່າ.

ການຊຳລະເງິນລ່ວງໜ້າເພື່ອສິດໃນການນຳໃຊ້ທີ່ດິນ ແມ່ນຈະຖືກຫັກໂດຍກົງຕະຫຼອດອາຍຸການນຳໃຊ້ ເມື່ອການເຊົ່າໃນການດຳເນີນງານໄດ້ຖືກຍົກເລີກກ່ອນກຳນົດ ແມ່ນຈະຕ້ອງໄດ້ມີການຈ່າຍຄ່າປັບໄໝ ໂດຍຈະຖືກບັນທຶກເມື່ອມີການຍົກເລີກສັນຍາ

**2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)**

**2.14 ຜົນປະໂຫຍດຂອງພະນັກງານ**

ກ.) ຜົນປະໂຫຍດຂອງພະນັກງານໄລຍະສັ້ນ.

ຄ່າຈ້າງ, ເງິນເດືອນ, ມື້ພັກປະຈຳປີ ແລະ ການລາປ່ວຍ, ໂບນັດ ແລະ ຜົນປະໂຫຍດທີ່ບໍ່ເປັນເງິນ ທີ່ຈະເກີດຂຶ້ນໃນປີທີ່ກ່ຽວຂ້ອງກັບການປະຕິບັດງານຂອງພະນັກງານທະນາຄານ.

ຂ.) ຜົນປະໂຫຍດຂອງພະນັກງານຫຼັງອອກຈາກການ

ຜົນປະໂຫຍດຂອງພະນັກງານຫຼັງອອກຈາກການ ໄດ້ຖືກຈ່າຍໃຫ້ພະນັກງານທີ່ໄດ້ອອກຈາກການຂອງທະນາຄານ ໂດຍ ອີງການປະກັນສັງຄົມ ເຊິ່ງຂຶ້ນ ກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທາງທະນາຄານຈະຕ້ອງມີສ່ວນຮ່ວມໃນ ຜົນປະໂຫຍດນີ້ ດ້ວຍການຈ່າຍເບັຍ ປະກັນສັງຄົມໃຫ້ແກ່ໜ່ວຍງານປະກັນສັງຄົມ ດ້ວຍອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານ. ທະນາຄານບໍ່ມີຂໍ້ຜູກພັນອື່ນ ນອກເໜືອຈາກ ຜົນປະໂຫຍດນີ້ໃຫ້ແກ່ພະນັກງານ.

ຄ.) ຜົນປະໂຫຍດເມື່ອມີການເລີກຈ້າງງານ

ອີງຕາມມາດຕາທີ 90 ຂອງກົດໝາຍແຮງງານ ເຊິ່ງອອກໂດຍ ປະທານປະເທດ ໃນວັນທີ 18 ມັງກອນ 2014, ທາງທະນາຄານຍັງຕ້ອງໄດ້ຈ່າຍເງິນໃຫ້ແກ່ພະນັກງານ ຜູ້ທີ່ຖືກເລີກຈ້າງງານດ້ວຍກໍລະນີດັ່ງຕໍ່ໄປນີ້:

- ເງິນຊົດເຊີຍສຳລັບການຍົກເລີກສັນຍາການຈ້າງງານທີ່ຈະໄດ້ຮັບແມ່ນ 10% ຂອງເງິນເດືອນ ເດືອນສຸດທ້າຍ ຄູນໃຫ້ຈຳນວນເດືອນທີ່ເຮັດວຽກ;
- ສຳລັບເງິນຊົດເຊີຍໃນການຍົກເລີກສັນຍາການຈ້າງງານ ຕາມກົດໝາຍແຮງງານສະບັບປັບປຸງ ແມ່ນຈະໄດ້ຮັບ 15% ຂອງເງິນເດືອນ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກ; ແລະ
- ການຍົກເລີກສັນຍາຈ້າງງານສຳລັບເຫດຜົນທີ່ບໍ່ໄດ້ລະບຸໄວ້ໃນກົດໝາຍແຮງງານສະບັບປັບປຸງ, ທະນາຄານຕ້ອງດຳເນີນການຊົດເຊີຍຕາມສັນຍາຈ້າງງານລະຫວ່າງທະນາຄານ ແລະ ລູກຈ້າງ.

**2.15 ເງິນແຮ**

ເງິນແຮ ຖືກຮັບຮູ້ໃນເອກະສານລາຍງານການເງິນ ເມື່ອທະນາຄານ ມີຂໍ້ຜູກພັນທາງດ້ານກົດໝາຍ ຫຼື ມີພັນທະ ເນື່ອງຈາກເຫດການຜ່ານມາ ແລະ ເປັນໄປໄດ້ວ່າ ຈະມີການໄຫຼອອກຂອງຜົນປະໂຫຍດທາງເສດຖະກິດ ເພື່ອການຊຳລະພັນທະດັ່ງກ່າວ ແລະ ເມື່ອການຄາດຄະເນທີ່ສົມເຫດສົມຜົນແມ່ນສາມາດປະຕິບັດໄດ້.

**2.16 ອາກອນ**

ການເກັບອາກອນກຳໄລໃນປີ, ຂຶ້ນກັບກົດໝາຍສ່ວຍສາອາກອນ ວ່າດ້ວຍ ການເກັບອາກອນໃນ ສປປ ລາວ. ທະນາຄານ ສະເລ່ຍ 24% (2015: 24%) ຂອງອາກອນກຳໄລທັງໝົດ, ແລະ ຈະຕ້ອງຈ່າຍຕາມແຕ່ລະໄຕມາດ. (ອີງຕາມ ມາດຕາທີ 29: ອັດຕາອາກອນກຳໄລ, ກົດໝາຍອາກອນ ເລກທີ 023/ສພຊ. ລົງວັນທີ 28 ມັງກອນ 2016).

ຜົນຂາດທຶນທາງອາກອນທີ່ເກີດຂຶ້ນໃນປີ ສາມາດຍົກຍອດໄປຫັກກັບຜົນກຳໄລທີ່ໄດ້ຮັບຮູ້ ພາຍໃນ ສາມປີການອາກອນ ໂດຍເລີ່ມຈາກປີທີ່ມີການຂາດທຶນອາກອນເກີດຂຶ້ນ ເຊິ່ງຕ້ອງໄດ້ຮັບຮອງຈາກ ອົງການກວດສອບແຫ່ງລັດ ຫລື ບໍລິສັດກວດສອບເອກະລາດ ແລະ ໄດ້ຮັບຮູ້ຈາກເຈົ້າໜ້າທີ່ສ່ວຍສາອາກອນ. ເມື່ອເກີນກຳນົດ ສາມປີ, ການຂາດທຶນທີ່ຍັງບໍ່ໄດ້ຫັກນັ້ນອາດຈະບໍ່ສາມາດຫັກອອກຈາກກຳໄລ. ຕາມກົດໝາຍສ່ວຍສາອາກອນ ສະບັບປັບປຸງ ມາດຕາ 39: ຍອດຂາດທຶນທີ່ຍົກມາປະຈຳປີ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.17 ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ຫຼື ບຸກຄົນ, ທີ່ມີການຄວບຄຸມໂດຍ ທາງກົງ ຫຼື ທາງອ້ອມ ໜຶ່ງ ຫຼື ຫຼາຍກ່ວາ ຫຼື ຖືກຄວບຄຸມໂດຍຫົວໜ່ວຍອື່ນ ຫຼື ພາຍໃຕ້ການຄວບຄຸມແບບດຽວກັນກັບກິດຈະການທະນາຄານ ລວມທັງບໍລິສັດທີ່ຖືຮຸ້ນ, ບໍລິສັດໃນເຄືອ, ບໍລິສັດຍ່ອຍໃນກຸ່ມ ແລະ ບັນດາສາຂາຍ່ອຍ ລ້ວນແຕ່ເປັນພາກສ່ວນທີ່ກ່ຽວຂ້ອງກັນ. ນິຕິບຸກຄົນ ແລະ ບຸກຄົນທີ່ເປັນເຈົ້າຂອງໂດຍກົງ ຫຼື ທາງອ້ອມ ທີ່ມີສິດອຳນາດໃນການລົງຄະແນນສຽງ ທີ່ມີອິດທິພົນສຳຄັນຕໍ່ກັບທະນາຄານ, ຜູ້ບໍລິຫານລວມທັງ ຜູ້ອຳນວຍການ ຫຼື ພະນັກງານ ຂອງທະນາຄານ ແລະ ສະມາຊິກໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັນກັບບຸກຄົນເຫຼົ່ານີ້ ຍັງຖືເປັນພາກສ່ວນກ່ຽວຂ້ອງກັນ.

ໃນການພິຈາລະນາຄວາມສຳພັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງກັນ ແມ່ນເອົາໃຈໃສ່ເນື້ອໃນຄວາມສຳພັນ ແລະ ບໍ່ພຽງແຕ່ຮູບແບບທາງດ້ານກົດໝາຍ.

## 3. ນະໂຍບາຍການບໍລິຫານຄວາມສ່ຽງດ້ານການເງິນ

ຂໍ້ແນະນຳ ແລະ ນະໂຍບາຍການບໍລິຫານຄວາມສ່ຽງດ້ານການເງິນ ທີ່ຮັບຮອງເອົາໂດຍທະນາຄານ ເພື່ອບໍລິຫານຄວາມສ່ຽງທີ່ເກີດຂຶ້ນຈາກການດຳເນີນທຸລະກິດ ດັ່ງລຸ່ມນີ້:

### 3.1 ຄວາມສ່ຽງດ້ານສິນເຊື່ອ

